## ກອງທຶນຫລຸດຜ່ອນຄວາມທຸກຍາກ

### <u>ລາຍລະອຽດໜ້າທີ່ຮັບຜິດຊອບ</u>

**<u>ຕໍາແໜ່ງ:</u>** ວິສະວະກອນດ້ານກະສິກໍາ ຂັ້ນແຂວງ

**<u>ຈໍານວນ:</u>** 1 ຕໍາແໜ່ງ

**<u>ພາຍໃຕ້ການຊີ້ນໍາໂດຍກົງ:</u>** ຜູ້ປະສານງານແຂວງ

**<u>ໜ້າທີ່ຮັບຜິດຊອບໂດຍລວມ:</u>** ຮັບຜິດຊອບ ແລະ ຈັດຕັ້ງປະຕິບັດບັນດາກິດຈະກໍາຕ່າງໆ ທີ່ກ່ຽວກັນກັບວຽກງານດ້ານກະສິກໍາ, ເປັນຕົ້ນແມ່ນ ກິດຈະກໍາ ເພື່ອປັບປຸງຊີວິດການເປັນຢູ່ຂອງຊຸມຊົນ, ການຕະຫລາດ ແລະ ອື່ນໆ. ເປັນຜູ້ປະສານງານ ແລະ ຮັບຜິດຊອບລວມ ໃນການຈັດຕັ້ງປະຕິບັດໂຄງການຍ່ອຍດ້ານກະສິກໍາຢູ່ຂັ້ນເມືອງ. ຕິດຕາມ, ກວດກາ ແລະ ອໍານວຍຄວາມສະດວກໃນການຂໍເບີກຈ່າຍເງິນໂຄງການຍ່ອຍ ເພື່ອສະເໜີຕໍ່ສູນກາງ ໃນການອະນຸມັດ. ຊ່ວຍໃນການອອກແບບ ແລະ ປັບປຸງແບບໂຄງການຍ່ອຍ ພ້ອມທັງກໍານົດຫົວໜ່ວຍບໍລິມາດໃຫ້ແທດເໝາະກັບສະພາບພື້ນທີ່ຕົວຈິງ ແລະ ຖືກຍອມຮັບຕາມມາດຖານຂອງຂະແໜງການທີ່ກ່ຽວຂ້ອງ. ນອກຈາກນັ້ນ, ຍັງເປັນຜູ້ກະກຽມແຜ່ນພັບ, ຮູບພາບ ເພື່ອແນະນໍາກ່ຽວກັບການກໍ່ສ້າງ ແລະ ບໍາລຸງຮັກສາໂຄງການຍ່ອຍ.

**<u>ບ່ອນປະຈໍາການ:</u>** ຫ້ອງການ ທລຍ ແຂວງ

**<u>ໄລຍະເວລາປະຕິບັດວຽກ:</u>** ພາຍຫລັງທີ່ຜ່ານໄລຍະທົດສອບ 4 ເດືອນ, ທ່ານຈະໄດ້ຮັບສັນຍາເປັນລາຍປີ ແລະ ອີງຕາມໄລຍະຂອງໂຄງການ

**<u>ລາຍລະອຽດໜ້າວຽກ</u>:**

1. ມີຄວາມເຂົ້າໃຈ ແລະ ລຶ້ງເຄີຍກັບບັນດາຄູ່ມືແຜນແມ່ບົດພັດທະນາຂອງໂຄງການ ໂດຍສະເພາະຄູ່ມືທາງດ້ານວິຊາການ.
2. ເປັນຜູ້ຊ່ວຍ ແລະ ເຮັດວຽກໃກ້ຊິດກັບວິຊາການກໍ່ສ້າງ ແລະ ພັດທະນາຊຸມຊົນຂັ້ນແຂວງ/ເມືອງ ແລະ ພາກສ່ວນອື່ນໆ ທີ່ກ່ຽວຂ້ອງ.
3. ກໍານົດແຜນຈັດຕັ້ງປະຕິບັດໂຄງການຍ່ອຍຕາມການມອບໝາຍ ແລະ ຕາມຮອບວຽນຂອງໂຄງການ.
4. ຊີ້ນໍາໃນການຈັດຕັ້ງປະຕິບັດໂຄງການຍ່ອຍໃຫ້ຖືກຕ້ອງຕາມແບບ, ຄຸນນະພາບ ແລະ ເວລາທີ່ກໍານົດໄວ້.

5. ຊ່ວຍອອກແບບຄູ່ມືການສອນ ແລະ ຈັດຕັ້ງການຝຶກອົບຮົມໃຫ້ກັບຊຸມຊົນ ໃນກຸ່ມບ້ານ ແລະ ບ້ານເປົ້າໝາຍ ກ່ຽວກັບການນຳໃຊ້ ແລະ ບຳລຸງຮັກສາໂຄງການຍ່ອຍດ້ານກະສິກຳໃຫ້ມີຄວາມຍືນຍົງ.
6. ຊ່ວຍພະນັກງານ ຫລຍ ຂັ້ນເມືອງ ໃນການດຳເນີນການຈັດຕັ້ງປະຕິບັດວຽກງານຝຶກອົບຮົມ ໃນຫົວຂໍ້ທີ່ກ່ຽວຂ້ອງ.
7. ສຳຫລວດລາຄາວັດສະດຸກໍ່ສ້າງ ແລະ ອຸປະກອນຮັບໃຊ້ຕ່າງໆ ກ່ຽວກັບໂຄງການຍ່ອຍດ້ານກະສິກຳໃນທ້ອງຖິ່ນຢ່າງເປັນປະຈຳ ແລະ ປັບປຸງເຂົ້າໃນລະບົບຖານຂໍ້ມູນລາຄາຫົວໜ່ວຍ.
8. ກະກຽມບົດລາຍງານຄວາມຄືບໜ້າຂອງວຽກທີ່ຕົນຮັບຜິດຊອບ ໂດຍສົມທົບກັບພາກສ່ວນທີ່ກ່ຽວຂ້ອງ. ເຊັ່ນ: ບົດລາຍງານປະຈຳເດືອນ, ໄຕມາດ ແລະ ປີ ຫລື ຕາມຄວາມຮຽກຮ້ອງຕ້ອງການ.
9. ກວດກາ ແລະ ຮັບຮອງໃບສະເໜີຂໍເບີກຈ່າຍເງິນ (ກິດຈະກຳທີ່ກ່ຽວພັນກັບໂຄງການຍ່ອຍດ້ານກະສິກຳ) ທີ່ສະເໜີຈາກຊຸມຊົນ.
10. ວິເຄາະຂໍ້ມູນຢູ່ຂັ້ນບ້ານ ແລະ ກຸ່ມບ້ານ ແລະ ປະເມີນກ່ຽວກັບກັບກິດຈະກຳທີ່ປັບປຸງຊີວິດການເປັນຢູ່ຂອງຊຸມ
11. ຊົນຢູ່ທ້ອງຖິ່ນ ຫລື ເມືອງເປົ້າໝາຍດັ່ງກ່າວ ເພື່ອເປັນພື້ນຖານ ແລະ ຂໍ້ມູນໃນການສ້າງໂຄງການຍ່ອຍດ້ານກະສິກຳໃຫ້ເຂົາເຈົ້າ.
12. ສຳຫລວດ, ອອກແບບສະຖານທີ່ລ້ຽງສັດ ພ້ອມທັງອຸປະກອນສຳລັບການສ້າງຟາມລ້ຽງສັດຂະໜາດນ້ອຍ, ປະເພດສັດ, ອາຫານສັດ ເພື່ອໃຫ້ເໝາະສົມກັບສະພາບຕົວຈິງຂອງທ້ອງຖິ່ນ.
13. ປະສານງານກັບອຳນາດການປົກຄອງທ້ອງຖິ່ນ ແລະ ຊຸມຊົນ ໃນການກຳນົດສະຖານທີ່ກໍ່ສ້າງສາງເກັບເມັດພັນພືດ ແລະ ເຂດລ້ຽງສັດ ໃຫ້ເໝາະສົມກັບພື້ນທີ່.
14. ປະສານງານກັບຫ້ອງການກະສິກຳ-ປ່າໄມ້ ແຂວງ/ເມືອງ ຢ່າງໃກ້ຊິດໃນການວາງແຜນຈັດຕັ້ງປະຕິບັດໂຄງການຍ່ອຍ ເພື່ອຮັບປະກັນຄວາມສອດຄ່ອງກັນທາງດ້ານມາດຕະຖານຂອງໂຄງການຍ່ອຍ ແລະ ເງື່ອນໄຂອື່ນໆຂອງລັດຖະບານ ແລະ ຜູ້ໃຫ້ທຶນ.
15. ຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດໂຄງການຍ່ອຍດ້ານກະສິກຳໃນແຕ່ລະໄລຍະ ພ້ອມທັງເກັບກຳ ແລະ ບັນທຶກຂໍ້ມູນ ແລະ ກະຈາຍຂ່າວສານວຽກງານທີ່ເປັນຕົວແບບ ຫລື ໄດ້ຮັບຜົນສຳເລັດ ອອກສູ່ສັງຄົມ.
16. ຮັບຜິດຊອບວຽກອື່ນໆ ຕາມການມອບໝາຍ ແລະ ຮຽກຮ້ອງຕ້ອງການຂອງໂຄງການ.

<u>**ປະສົບການ ແລະ ຄຸນວຸດທິທີ່ຈຳເປັນ:**</u>

- ຮຽນຈົບປະລິນຍາຕີ ຫລື ທຽບເທົ່າ ດ້ານວິຊາປູກຝັງ ແລະ ລ້ຽງສັດ
- ມີປະສົບການເຮັດວຽກດ້ານການສົ່ງເສີມກະສິກຳ (ປູກຝັງ-ລ້ຽງສັດ) ຢ່າງໜ້ອຍ 3 ປີ

- ມີປະສົບການໃນການເຮັດວຽກ, ວາງແຜນ ແລະ ບໍລິຫານໃນຮູບແບບການຂັບເຄື່ອນດ້ວຍຊຸມຊົນຢ່າງໜ້ອຍ 2 ປີ
- ມີຄວາມຮູ້ ແລະ ປະສົບການໃນວຽກງານພັດທະນາຊຸມຊົນ, ໄດ້ຮັບການຝຶກອົບຮົມ ແລະ ເປັນຄູຝຶກມາກ່ອນ.
- ມີຄວາມຮູ້ທາງດ້ານເຕັກນິກການກໍ່ສ້າງໂຄງລ່າງດ້ານກະສິກຳຍິ່ງເປັນການດີ
- ມີຄວາມຮູ້ກ່ຽວກັບການຈັດຕັ້ງປະຕິບັດກິດຈະກຳ ເພື່ອປັບປຸງຊີວິດການເປັນຢູ່ໃຫ້ແກ່ຊຸມຊົນ
- ມີປະສົບການໃນການຈັດຕັ້ງການຈັດຕັ້ງການຝຶກອົບຮົມມາກ່ອນ ຍິ່ງເປັນການດີ
- ມີຄວາມຮູ້ ແລະ ເຂົ້າໃຈກ່ຽວກັບວຽກງານບົດບາດຍິງ-ຊາຍ ແລະ ຊົນເຜົ່າ
- ມີຄວາມຮູ້ ແລະ ສາມາດນຳໃຊ້ຄອມພິວເຕີ້ (MS. Office) ເຂົ້າໃນວຽກຂອງຕົນ
- ສາມາດນຳໃຊ້ໂປຣແກຣມໂອໂຕແຄັດ ໃນການແຕ້ມ ແລະ ອອກແບບ ຍິ່ງເປັນການດີ
- ສາມາດເຮັດວຽກເປັນທີມ, ມີມະນຸດສຳພັນດີ ແລະ ສື່ສານກັບປະຊາຊົນທ້ອງຖິ່ນໄດ້ດີ
- ສາມາດເດີນທາງໄປເຮັດວຽກຢູ່ເຂດທຸລະກັນດານ ຫລື ບ່ອນຫ່າງໄກສອກຫລີກ